ຂັ້ນຕອນການລ້ຽງປາໃນນາເຂົ້າ

05

1 ການເລືອກພື້ນທີ່ນາ, ປັບປຸງຄັນຄູນາ ແລະ ຂຸດຮອງ

- ທີ່ງນາທີ່ຈະລ້ຽງປາຕ້ອງເກັບຮັກສານ້ຳໄດ້ຢ່າງນ້ອຍ 30 ຊັງຕີແມັດໃນໄລຍະຕະຫຼອດລະດູການເຮັດນາ,
- ພື້ນທີ່ນາຕ້ອງໃກ້ບ້ານ ຫຼື ເຮືອນ, ພື້ນທີ່ນ້ຳບໍ່ຖ້ວມຫຼາຍ, ມີແຫຼ່ງຊົນລະປະທານ ຫຼື ຫ້ວຍ ທີ່ສາມາດໃຊ້ນ້ຳເຂົ້າໃນການເຮັດນາໄດ້ຕະລອດເວລາ.
- ປັບປຸງຄັນນາໃຫ້ສູງປະມານ 50 ຊັງຕີແມັດ ຫຼັງຈາກນັ້ນໃຫ້ຂຸດຮ່ອງລອບຄັນນາໃຫ້ໄດ້ຄວາມກ້ວາງປະມານ 80 - 100 ຊັງຕີແມັດ ແລະ ມີຄວາມເລິກປະມານ 50-80 ຊັງຕີແມັດ ເພື່ອເປັນບ່ອນອາໃສຂອງປາໃນຊ່ວງເຮັດນາ.
- ການລ້ຽງປາໃນນາເຂົ້າຕ້ອງເຮັດບ່ອນລວມປາ ຫຼື ໜອງຂະໜາດນ້ອຍຢູ່ແຈຄັນນາເຊິ່ງມີຂະໜາດ 3x2 ແມັດ ແລະ ເລິກ 1.5 ແມັດ. ເພື່ອເປັນບ່ອນຢູ່ຂອງປາຫຼັງຈາກເກັບກ່ຽວເຂົ້າແລ້ວ ແລະ ຍັງເປັນບ່ອນອະນຸບານລູກປາກ່ອນປ່ອຍປາລົງລ້ຽງໃນນາ.



ລັກສະນະພື້ນທີ່ລ້ຽງປາໃນນາເຂົ້າ

2 ການເລືອກແນວພັນປາທີ່ນຳມາປ່ອຍລ້ຽງ

- ປານິນ (Tilapia): ເປັນປາທີ່ສາມາດຂະຫຍາຍພັນໄດ້ເອງໃນໜອງ, ລ້ຽງງ່າຍ, ມີການຈະເລີນເຕີບໃຫຍ່ໄວ ແລະ ຈະຢູ່ເປັນໝູ່. ປານິນໂດຍທົ່ວໄປຈະກິນອາຫານຈຳພວກຜືດນ້ຳ, ພວກໄຮນ້ຳ ແລະ ໂຕອ່ອນຂອງແມງໄມ້. ຖ້າລ້ຽງໄດ້ດີໃນເວລາ 6-8 ເດືອນຈະໄດ້ນ້ຳໜັກປາ 300-500 ກຼາມ/ໂຕ.
- ປາໄນ (Common carp): ເປັນປາປະເພດກິນຜືດ, ມັກຂຸດຄົ້ຍກິນອາຫານຕາມພື້ນທີ່ນາ, ມັກກິນອາຫານເລີ້ມຈະເນົ່າ.ບໍ່ຄວນລ້ຽງໃນປະລິມານຫຼາຍ,ຖ້າລ້ຽງໃນປະລິມານຫຼາຍຈະມີບັນຫາເຮັດໃຫ້ຄັນຄູນາເຈາະເຈື່ອນ.
- ປາປາກ (Silver barb): ເປັນປາປະເພດກິນຜືດ ເປັນຕົ້ນແມ່ນຜັກບົ້ງ, ປາຊະນິດນີ້ຈະມັກຢູ່ລວມກັນເປັນໝູ່, ແລະ ຫາກິນຢູ່ກາງນ້ຳ, ມັກຢູ່ໃນແຫຼ່ງນ້ຳທີ່ສະອາດ, ລ້ຽງງ່າຍ, ມີການຈະເລີນເຕີບໂຕ ແລະ ໃຫຍ່ໄວ .

ປານິນ

ປາໄນ

ປາປາກ

3 ການຄັດເລືອກລູກປາ ແລະ ອັດຕາການປ່ອຍປາລ້ຽງ

ລູກປາທີ່ຈະເອົາມາລ້ຽງໃນນາເຂົ້າຕ້ອງມີຂະນາດ 10 ຊມ, ເພາະວ່າການລ້ຽງປາໃນນາເຂົ້າຈະໃຊ້ເວລາປະມານ 3-4 ເດືອນ, ລູກປາທີ່ເອົາມາລ້ຽງຕ້ອງແຂງແຮງດີ ແລະ ບໍ່ເປັນພະຍາດ. ແນວພັນປາທີ່ນຳລ້ຽງໄດ້ແກ່ປານິນ, ປາໄນ ແລະ ປາປາກ, ຖ້າເນື້ອທີ່ນາລ້ຽງປາມີ 1 ໄລ່ຈະປ່ອຍປາລ້ຽງໃນອັດຕາດັ່ງຕາຕະລາງລຸ່ມນີ້.

ການປ່ອຍປາຫຼາຍຊະນິດລວມກັນໃນອັດຕາການປ່ອຍ 1 ໂຕ/ມ^2 ໃນເນື້ອທີ່ນາ 1,600 ຕາແມັດ

ຮູບແບບການປ່ອຍປາ	ຊະນິດແນວພັນປາ (ໂຕ)	ຈຳນວນການປ່ອຍປາ (ໂຕ)
1. ປ່ອຍປາຊະນິດດຽວ	ປານິນ	1,600
2. ປ່ອຍປາຫຼາຍຊະນິດ	ປານິນ ປາໄນ ປາປາກ	1,000 200 400

ລູກປາຂະໜາດໃຫຍ່ສາມາດປ່ອຍລ້ຽງໄດ້

ລູກປາຂະໜາດນ້ອຍຕ້ອງອານຸບານກ່ອນປ່ອຍລ້ຽງ

4 ການອະນຸບານລູກປາໃນກະຊັງກ່ອນປ່ອຍລ້ຽງ

- ນຳຖົງລູກປາລອຍໃນໜອງໄວ້ບ່ອນຄື່ມປະມານ 10-15 ນາທີ.
- ເປີດຖົງລູກປາອອກແລ້ວເອົານ້ຳໜອງປາໃສ່ໃນຖົງເທື່ອລະໜ້ອຍເພື່ອໃຫ້ລູກປາໄດ້ປັບໂຕ ເຂົ້າກັບສະພາບຂອງນ້ຳໃນໜອງ.
- ເມື່ອລູກປາປັບໂຕກັບສະພາບນ້ຳໃໝ່ແລ້ວຈຶ່ງເອົາລູກປາອອກ.
- ການໃຫ້ອາຫານລູກປາແມ່ນໃຫ້ຮຳອ່ອນປະສົມກັບອາຫານຝຸ່ນຂອງໝູນ້ອຍ, ໃນອັດຕາການໃຫ້ແມ່ນ 14 ເປີເຊັນ/ນ້ຳໜັກປາ/ວັນ.

ປະລິມານອາຫານອະນຸບານລູກປາຈຳນວນ 1,600 ໂຕ

ໄລຍະເວລາການລ້ຽງ (ອາທິດ)	ອັດຕາການໃຫ້ອາຫານ (ກະປ໋ອງປາ)	
	ຕອນເຊົ້າ	ຕອນແລງ
1	2	2
2-3	4	4

ການໃຫ້ອາຫານປາໃນການອະນຸບານລູກປາໃນກະຊັງ

ການອະນຸບານລູກປາໃນກະຊັງກອນປ່ອຍລ້ຽງ

5 ປະເພດອາຫານ, ວິທີການເຮັດ ແລະ ການໃຫ້ອາຫານ

5.1 ປະເພດອາຫານ

ປະເພດຂອງອາຫານປາທີ່ມີການລ້ຽງລວມກັນຫຼາຍຊະນິດຈະມີປາຊະນິດກິນຜືດ, ກິນທັງຜືດ ແລະ ຊີ້ນຢູ່ນຳກັນ. ປະເພດອາຫານຈະມີອາຫານສຳເລັດຮູບ ແລະ ອາຫານສິດ, ອາຫານສິດທີ່ສາມາດຫາໄດ້ຕາມທ້ອງຖິ່ນຈະມີ 3 ກຸ່ມເຊັ່ນ:

- ອາຫານກຸ່ມຜືດຜັກ ເຊັ່ນ: ຜັກບົ້ງ, ໃບມັນຕົ້ນ, ໃບມັນດ້ວງ, ໃບຫຍ້າຢາງ ແລະ ແໜນຫາງເຫີນ.
- ອາຫານກຸ່ມແປ້ງ ເຊັ່ນ: ຮຳ, ເຂົ້າປາຍ, ເຂົ້າສານ ແລະ ຫົວມັນຕົ້ນ.
- ອາຫານກຸ່ມຊີ້ນ ເຊັ່ນ: ແມງໄມ້ຊະນິດຕ່າງໆ, ປອກ, ຫອຍ, ກະປູ ແລະ ຂີ້ກະເດືອນ.

5.2 ວິທີການເຮັດ ແລະ ການໃຫ້ອາຫານ

ການເຮັດອາຫານປາໂດຍວິທີງ່າຍໆ ຊຶ່ງມີຫຼາຍວິທີດັ່ງຕໍ່ໄປນີ້:

- ການໃຫ້ອາຫານໂດຍກົງຖ້າເປັນອາຫານທີ່ລະອຽດ ຫຼື ອ່ອນພໍທີ່ປາສາມາດກັດກິນໄດ້ ຫຼື ບົດລະອຽດກ່ອນຈະໃຫ້ປາກິນ.
- ການປະສົມອາຫານສາມາດນຳອາຫານທີ່ຊອຍລະອຽດແລ້ວມາປະສົມເຂົ້າກັນໂດຍຕື່ມນ້ຳພໍປັ້ນເປັນກ້ອນໄດ້ ຈຶ່ງເອົາໄປໃຫ້ປາກິນ ຖ້າຕ້ອງການໃຫ້ປາກິນງ່າຍ, ຍ່ອຍໄດ້ດີ ແລະ ມີລົດຊາດດີຄວນຕື່ມອາຫານກຸ່ມແປ້ງກ່ອນ ເມື່ອອາຫານເຢັນລົງຈຶ່ງປະສົມດ້ວຍອາຫານກຸ່ມຊີ້ນ ແລະ ກຸ່ມຜືດຜັກຈຶ່ງປັ້ນເປັນກ້ອນກ່ອນຈຶ່ງເອົາໄປໃຫ້ປາກິນ.
- ການປະສົມອາຫານສາມາດປະສົມອາຫານທັງ 3 ກຸ່ມ ເຂົ້າກັນໂດຍໃຊ້ກຸ່ມລະ 1 ກິໂລ.
- ຄວນເຮັດບ່ອນໃຫ້ອາຫານປາ ຊຶ່ງຈົມຢູ່ພື້ນນ້ຳພໍປະມານ ແລະ ສາມາດເບິ່ງເຫັນໄດ້ ແລ້ວຈຶ່ງເອົາອາຫານທີ່ປັ້ນເປັນກ້ອນໃຫ້ປາກິນ ແລະ ໃຫ້ທຸກໆວັນ, ອັດຕາການໃຫ້ແມ່ນປະມານ 2-3 ເປີເຊັນຂອງນ້ຳໜັກປາຕໍ່ວັນ, ເວລາແມ່ນໃຫ້ໃນຕອນເຊົ້າ ແລະ ຕອນແລງ.
- ເມື່ອໃຫ້ອາຫານຈຳນວນໜຶ່ງໃນບ່ອນໃສ່ອາຫານ ແລ້ວຕ້ອງສັງເກດການກິນອາຫານຂອງປາໂດຍສັງເກດຫຼັງຈາກໃຫ້ອາຫານໄປແລ້ວ 30 ນາທີ ຖ້າອາຫານໝົດກໍໃຫ້ເພີ່ມອາຫານຂຶ້ນອີກ, ແຕ່ຖ້າອາຫານເຫຼືອຢູ່ຕ້ອງໃຫ້ລົດລົງໃນວັນຕໍ່ໄປ.

6 ການປ້ອງກັນຮັກສາ ແລະ ການເກັບກູ້ຜົນຜະລິດ

- ໃຫ້ອາຫານເສີມເປັນປະຈຳ ແລະ ສັງເກດການກິນອາຫານຂອງປາເປັນປົກກະຕິດີ, ຖ້າປາບໍ່ກິນອາຫານດີ ຫຼື ປາຂຶ້ນມາຫາຍໃຈໃນຕອນເຊົ້າ (6ໂມງເຊົ້າ)ໃຫ້ປ່ອຍນ້ຳເຂົ້າໃນພື້ນທີ່ນາເພີ່ມອີກ.
- ການເກັບກ່ຽວເຂົ້າອອກໃຫ້ໝົດກ່ອນ ຫຼັງຈາກນັ້ນຊົ່ງເກັບກູ້ປາ.
- ການເກັບກູ້ປາຖ້າມີລູກປານິນຫຼາຍໃຫ້ເກັບເອົາລູກປາໄປອະນຸບານໃນກະຊັງຢູ່ໃນໜອງເພື່ອນຳມາປ່ອຍລ້ຽງໃນຕໍ່ໜ້າ.

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la